# ໂຮງຮຽນວັນອາທິດ

**ວັນອາທິດ ທີ 8 ເດືອນພຶສຈິກາ 2020 (11-08-2020)**

## ຍຶດໝັ້ນຕໍ່ຄຣິສຕະຈັກຂອງພຣະຄຣິດ.

ຄວາມຊົງຈຳອັນແລກຂອງທ່ານກ່ຽວກັບຄຣິສຕະຈັກແມ່ນຫຍັງ?

**ຈຸດສຳຄັນໃນບົດຮຽນ:**ຄຳໝັ້ນສັນຍາກັບພຣະຄຣິດລວມເຖິງຄວາມຕັ້ງໃຈຕໍ່ພຣະກາຍຂອງພຣະອົງ, ຄືຄຣິສຕະຈັກ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

"ໝູ່ເພື່ອນຂອງທ່ານກໍ່ແມ່ນໝູ່ເພື່ອນຂອງຂ້າພະເຈົ້າ." ພວກເຮົາຫຼາຍຄົນໄດ້ໃຊ້ປໂຍກທີ່ບໍ່ເຄີຍລ້າສມັຍ, ແຕ່ວ່າເມື່ອພວກເຮົາໄດ້ມາຮູ້ຈັກກັບເພື່ອນຂອງເພື່ອນ, ພວກເຮົາອາດຈະປ່ຽນສຳນຽງສຽງເວົ້າຂອງພວກເຮົາ. ພຽງແຕ່ຍ້ອນວ່າພວກເຮົາມີບາງສິ່ງບາງຢ່າງທີ່ຄ້າຍຄືກັບໝູ່ບໍ່ໄດ້ໝາຍຄວາມວ່າພວກເຮົາມີສິ່ງໃດແຕກຕ່າງຄ້າຍຄືກັນກັບໝູ່ເພື່ອນຄົນອື່ນໆ.

ມິດຕະພາບໝູ່ເພື່ອນເປັນເຣື່ອງນຶ່ງ, ທີ່ມັນແຕກຕ່າງກັນທັງໝົດກັບຄົນທີ່ເຮົາຮັກ. ຖ້າມີຄົນເວົ້າກັບຂ້າພະເຈົ້າວ່າ, "ຂ້ອຍຮັກເຈົ້າ, ແຕ່ຂ້ອຍບໍ່ສາມາດຍອມຮັບພັຣຍາຂອງເຈົ້າໄດ້," ຂ້າພະເຈົ້າຈະມີຄວາມຮູ້ສຶກເສັຽໃຈທີ່ສຸດ. ພັຣຍາຂອງຂ້າພະເຈົ້າເປັນສ່ວນນຶ່ງໃນຊີວິດຂອງຂ້າພະເຈົ້າ, ແລະຈະບໍ່ມີຜູ້ໃດທີ່ຈະຮັກຂ້າພະເຈົ້າໂດຍທີ່ບໍ່ຮັກພັຣຍາຂອງຂ້າພະເຈົ້າ. ທັສນະຄະຕິທີ່ບໍ່ດີຕໍ່ພັຣຍາຂອງຂ້າພະເຈົ້າຈະເປັນສິ່ງກີດກັ້ນໃຫ້ກັບຂ້າພະເຈົ້າຕລອດເວລາ.

ພວກເຮົາເຄີຍໄດ້ຍິນຄຳເວົ້າຢ່າງດຽວກັນນີ້ໃນກຸ່ມຄຣິສຕຽນຂອງພວກເຮົາ: "ຂ້ານ້ອຍຮັກພຣະເຢຊູ, ແຕ່ຂ້ານ້ອຍບໍ່ມັກຄຣິສຕະຈັກ." ບາງທີເຂົາໄດ້ຮັບຄວາມເດືອດຮ້ອນຈາກຄົນໃນຄຣິສຕະຈັກຫຼືພວກເຂົາພົບວ່າຄວາມຜູກພັນກັບຄຣິສຕະຈັກມີຄວາມຕ້ອງການຫຼາຍເກີນໄປຫຼືມີຄວາມຫຍຸ້ງຍາກເກີນໄປ. ບໍ່ວ່າຈະເປັນເຫດຜົນໃດກໍ່ຕາມ, ຄວາມຮູ້ສຶກແບບນີ້ແມ່ນຢູ່ຫ່າງໄກຈາກນ້ຳພຣະທັຍຂອງພຣະເຈົ້າ. ຄຣິສຕະຈັກເປັນເຈົ້າສາວຂອງພຣະຄຣິດ. ພວກເຮົາຕ້ອງຮັກສິ່ງທີ່ພຣະຄຣິດຮັກ, ແລະນັ້ນລວມໄປເຖິງເຈົ້າສາວຂອງພຣະຄຣິດ, ຄືຄຣິສຕະຈັກ.

**ພຣະຄຳພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ໂຣມ 12:3-5

3. ເຮົາກ່າວແກ່ເຈົ້າທັງຫຼາຍທຸກຄົນໂດຍພຣະຄຸນທີ່ຊົງປະທານແກ່ເຮົາແລ້ວວ່າຢ່າຄຶດຖືຕົວເກີນທີ່ຕົນຄວນຈະຄຶດນັ້ນ ແຕ່ຈົ່ງຄຶດໃຫ້ພໍສົມກັບຂນາດແຫ່ງຄວາມເຊື່ອທີ່ພຣະເຈົ້າໄດ້ຊົງໂຜດປະທານໃຫ້ແກ່ທຸກຄົນ. *4.* ເພາະວ່າໃນຮ່າງກາຍອັນດຽວນັ້ນມີອະວັຍວະຫຼາຍຢ່າງແລະອະວັຍວະເຫຼົ່ານັ້ນບໍ່ມີໜ້າທີ່ຢ່າງດຽວກັນສັນໃດ. *5.* ພວກເຮົາຜູ້ເປັນຫຼາຍຄົນກໍຍັງເປັນຮ່າງການອັນດຽວໃນພຣະຄຣິດແລະເປັນອະວັຍວະແກ່ກັນແລະກັນສັນນັ້ນ.

ໂດຍບໍ່ຄຳນຶງເຖິງທັສນະຄວາມຄິດເຫັນຂອງຄຣິສຕະຈັກຂອງພວກເຮົາ, ຖ້າພວກເຮົາຕິດພັນຢູ່ກັບພຣະຄຣິດໃນຖານະເປັນຜູ້ຕິດຕາມຂອງພຣະອົງ, "ພວກເຮົາຈະຕິດພັນຢູ່ກັບຄຣິສຕະຈັກ, ພວກເຮົາ…ແມ່ນຮ່າງກາຍດຽວໃນພຣະຄຣິດ" (ຂໍ້ 5). ພວກເຮົາບໍ່ໄດ້ສູນເສັຽຄວາມເປັນສ່ວນຕົວຫຼືຄວາມເປັນເອກລັກຂອງພວກເຮົາ, ແຕ່ພວກເຮົາມີຄວາມເຊື່ອມໂຍງທີ່ບໍ່ສາມາດແຍກອອກຈາກຄຣິສຕຽນຄົນອື່ນໆໄດ້. ພວກເຮົາສາມາດແຕກຕ່າງກັນໃນທາງດ້ານເຊື້ອຊາດ, ຊົນເຜົ່າ, ເພດ, ແລະສະພາບທາງເສດຖະກິດທາງສັງຄົມ, ແຕ່ພວກເຮົາທຸກຄົນກໍເປັນສ່ວນນຶ່ງໃນພຣະຄຣິດ.

ທາງຝ່າຍຮ່າງກາຍຂອງພວກເຮົາສະແດງໃຫ້ເຫັນຕົວຢ່າງທີ່ຍິ່ງໃຫ່ຽຂອງວິທີການທີ່ພວກເຮົາເປັນຢູ່ໃນຄຣິສຕະຈັກ. ເບິ່ງມືຂອງທ່ານ. ເບິ່ງນິ້ວມືແຕ່ລະນີ້ວຢ່າງໃກ້ຊິດ. ບັດນີ້ເບິ່ງຕີນຂອງທ່ານ. ຈັບເອົາແວ່ນມາແຍງເບິ່ງດັ່ງແລະ

ຕາຂອງທ່ານ, ແລ້ວພິຈາລະນາເບິ່ງຄວາມແຕກຕ່າງຂອງມື, ຕີນ, ດັງ, ແລະຕາຂອງທ່ານທີ່ແຕກຕ່າງກັນ. ແຕ່ລະອະວັຍວະເຮັດໜ້າທີ່ຂອງໃຜຂອງມັນ, ແລະແນ່ນອນວ່າມັນທຳໜ້າທີ່ແຕກຕ່າງກັນ. ທຳໜ້າທີ່ບໍ່ຄ້າຍຄືກັນ, ແຕ່ວ່າມັນເປັນສ່ວນນຶ່ງຂອງຮ່າງກາຍຂອງທ່ານ. ທ່ານແມ່ນນຶ່ງໃນຮ່າງກາຍທີ່ໂດດເດັ່ນ. ທີ່ປະກອບດ້ວຍສ່ວນທີ່ແຕກຕ່າງ, ເປັນເອກລັກແລະໜ້າອັສຈັນ. ໃນຂນະທີ່ໂປ້ຕີນເບື້ອງຂວາຫຼືຕາເບື້ອງຊ້າຍຂອງທ່ານເປັນສ່ວນນຶ່ງຂອງຮ່າງກາຍຂອງທ່ານ. ທັງສອງສ່ວນນີ້ເປັນອະວັຍວະຂອງຮ່າງກາຍຂອງທ່ານແລະຄວາມເປັນຈິງນັ້ນບໍ່ສາມາດປ່ຽນແປງຫຼືປ່ຽນແປງໄດ້. ດັ່ງນັ້ນພວກເຮົາກັບຄຣິສຕະຈັກກໍເໝືອນກັນ.

ໂປໂລໄດ້ກ້າວຕໍ່ໄປອີກບາດກ້າວນຶ່ງ. ມັນບໍ່ພຽງແຕ່ວ່າພວກທ່ານໄດ້ເຊື່ອມຕໍ່ກັບພຣະຄຣິດແລະຂ້າພະເຈົ້າໄດ້ເຊື່ອມຕໍ່ກັບພຣະຄຣິດ, "ແຕ່ພວກເຮົາຜູ້ເປັນຫຼາຍຄົນກໍ່ຍັງເປັນຮ່າງກາຍອັນດຽວກັນ" (ຂໍ້ 5). ພວກເຮົາຕ້ອງການເຊິ່ງກັນແລະກັນ, ແລະພວກເຮົາເປັນຂອງກັນແລະກັນ! ໜ້າທີ່ບົດບາດຂອງຂ້າພະເຈົ້າທີ່ເຮັດໃນຮ່າງກາຍຂອງພຣະຄຣິດ ແມ່ນເປັນສິ່ງທີ່ສຳຄັນຕໍ່ບົດບາດໜ້າທີ່ຂອງທ່ານໃນຮ່າງກາຍຂອງພຣະຄຣິດເໝືອນກັນ, ແລະບົດບາດໜ້າທີ່ຂອງທ່ານແມ່ນມີຄວາມຈຳເປັນເທົ່າທຽມກັນໃນການປະຕິບັດພາລະບົດບາດຂອງຂ້າພະເຈົ້າເຊັ່ນກັນ. ພຣະຄຣິດໄດ້ສ້າງຕັ້ງຄຣິສຕະຈັກຂອງພຣະອົງເພື່ອວ່າພວກເຮົາຈະໄດ້ຕ້ອງການເຊິ່ງກັນແລະກັນຖ້າພວກເຮົາແຕ່ລະຄົນເຮັດໜ້າທີ່ທີ່ເປັນອະວັຍວະຂອງຮ່າງກາຍ, ຮ່າງກາຍນີ້ກໍ່ຈະແຂງແຮງດີ.

ໃນສິ່ງນີ້ເປັນໄປໄດ້ເພາະວ່າພວກເຮົາຢູ່ໃນພຣະຄຣິດ. ໂລກເບິ່ງຄວາມຫຼາກຫຼາຍແລະການແບ່ງແຍກ (ແລະຄວາມໜ້າເສັຽດາຍ, ທີ່ຜູ້ທີ່ເຊື່ອມັກຊີ້ເຂົ້າໄປໃນການແບ່ງແຍກດັ່ງກ່າວ). ໂລກເຫັນສີດຳແລະສີຂາວ. ພັກຣີພັບຣີກັນແລະພັກເດໂມແຄັຣດ, ຄໍເສື້ອສີຟ້າແລະສີຂາວແລະສີອື່ນໆເຫຼົ່ານີ້ເປັນຕົ້ນ. ດ້ວຍຄວາມຄິດດັ່ງກ່າວ, ພວກເຮົາໄດ້ກາຍເປັນຜູ້ທີ່ແຕກຕ່າງຈາກກຸ່ມນັ້ນ, ຕິດສນິດກັບຄົນທີ່ "ຄືກັນກັບຂ້າພະເຈົ້າ" ພາຍໃນຄຣິສຕະຈັກ, ການແບ່ງແຍກເຫຼົ່ານັ້ນແມ່ນບໍ່ມີຄວາມໝາຍຫັຽງເລີຍ. ພຣະຄຣິດເຂົ້າໄປເຖິງຄວາມແຕກຕ່າງທັງໝົດແລະເຮັດໃຫ້ຄົນມີຄວາມເຊື່ອໃນພຣະອົງ. ພຣະອົງຮັກພວກເຮົາທຸກຄົນເທົ່າກັນແລະນຳພວກເຮົາມາຮ່ວມກັນຜ່ານທາງການແບ່ງປັນຄວາມເຊື່ອຂອງພວກເຮົາ. ດ້ວຍເຫດນີ້, ນີ້ໝາຍຄວາມວ່າບໍ່ມີຜູ້ເຊື່ອຄົນໃດຈະ "ຄິດຖືຕົວເກີນທີ່ຕົນຈະຄິດ" ( ຂໍ້ 3). ກົງກັນຂ້າມ, ພວກເຮົາຕ້ອງ"ຄິດຢ່າງຖືກຕ້ອງ,"ຍອມຮັບວ່າບໍ່ມີໃຜໃນພວກເຮົາດີກ່ວາຄົນອື່ນ. ພວກເຮົາມີຄວາມເປັນເອກລັກ- ແລະເປັນຂອງປະທານທີ່ແຕກຕ່າງທີ່ມາຈາກພຣະເຈົ້າ- ໂດຍບໍ່ມີຄວາມສຳຄັນຫຼືວິເສດ. ພວກເຮົາເປັນ "ຮ່າງກາຍອັນດຽວກັນ" ໃນພຣະຄຣິດ.

## 2. ໂຣມ 12:6-8

*6ແລະເຮົາທຸກຄົນໄດ້ຮັບຂອງພຣະຣາຊທານຕ່າງກັນຕາມພຣະຄຸນທີ່ໄດ້ຊົງໂຜດປະທານແກ່ພວກເຮົາຄືຖ້າເປັນການປະກາດພຣະທັມກໍຈົ່ງປະກາດຕາມຂນາດແຫ່ງຄວາມເຊື່ອ. 7ຖ້າເປັນການປະຕິບັດກໍຈົ່ງປະຕິບັດຖ້າເປັນການສັ່ງສອນກໍຈົ່ງສັ່ງສອນ. 8 ຖ້າເປັນການເຕືອນສະຕິກໍຈົ່ງເຕືອນສະຕິຖ້າເປັນການບໍຣິຈາກກໍຈົ່ງບໍຣິຈາກດ້ວຍໃຈກວ້າງຂວາງຜູ້ຄຸ້ມຄອງກໍຈົ່ງຄຸ້ມຄອງດ້ວຍເອົາໃຈໃສ່ຜູ້ທີ່ສະແດງຄວາມເມດຕາກໍຈົ່ງສະແດງດ້ວຍໃຈຍິນດີ.*

ພວກເຮົາຕ້ອງການເຊິ່ງກັນແລະກັນເພື່ອຈະເຣີນເຕີບໂຕຂຶ້ນ, ການຈະເຣີນເຕີບໂຕ, ແລະການກາຍເປັນທຸກສິ່ງຕາມການຊົງເອີ້ນທີ່ພຣະເຈົ້າຕ້ອງການໃຫ້ພວກເຮົາເປັນ. ຜູ້ທີ່ເຊື່ອຄົນອື່ນໄດ້ຊ່ວຍເຫຼືອແລະສນັບສນູນພວກເຮົາຜ່ານທາງຂອງພຣະຣາຊທານທີ່ແຕກຕ່າງກັນເຊິ່ງພຣະອົງໄດ້ມອບໃຫ້ແກ່ພວກເຮົາແຕ່ລະຄົນ, ພວກເຮົາມັກຈະກ່າວເຖິງຂອງພຣະຣາຊທານນີ້ວ່າເປັນ "ຂອງພຣະຣາຊທານຝ່າຍວິນຍານ." ເມື່ອພວກເຮົາໄດ້ຮັບຄວາມລອດ, ພວກເຮົາແຕ່ລະຄົນ- ເປັນສ່ວນນຶ່ງໃນພຣະກາຍຂອງພຣະຄຣິດ- ໄດ້ຮັບຂອງພຣະຣາຊທານເປັນເອກລັກສະເພາະທີ່ພວກເຮົາຄວນນຳມາໃຊ້ເພື່ອເສີມສ້າງຮ່າງກາຍຂອງພຣະຄຣິດ- ຄຣິສຕະຈັກ- ເປັນທຸກສິ່ງທີ່ພວກເຮົາຖືກສ້າງຂຶ້ນແລະຮຽກເອີ້ນໃຫ້ເປັນ.

ໂປໂລພຽງຍົກໃຫ້ເຫັນພາກສ່ວນນຶ່ງຂອງພຣະຣາຊທານເທົ່ານັ້ນ: ຄໍາທໍານວາຍ, ການຮັບໃຊ້, ການສັ່ງສອນ, ການແນະນໍາ, ການໃຫ້, ການນໍາແລະການສະແດງຄວາມເມດຕາ. ສິ່ງນີ້ຍັງບໍ່ແມ່ນຊື່ລາຍການຂອງພຣະຣາຊທານທັງໝົດ. ໂປໂລຍັງໄດ້ກ່າວເຖິງຂອງພຣະຣາຊທານໃນ 1 ໂກຣິນໂທ 12 ແລະເອເຟໂຊ 4:11, ແລະແຕ່ລະຢ່າງແມ່ນມີລາຍລະອຽດແຕກຕ່າງກັນພຽງເລັກນ້ອຍ. ໂປໂລໝາຍຄວາມວ່າຈະໃຫ້ຕົວຢ່າງຂອງພຣະຣາຊທານທາງຝ່າຍພຣະວິນຍານແລະວິທີການນໍາໃຊ້, ຍົກຕົວຢ່າງ, ຖ້າເຮົາມີພຣະພອນທາງດ້ານການບໍລິການ. ພວກເຮົາມີຄວາມກະຕືລືລົ້ນທີ່ຈະ "ໃຊ້ມັນໃນການບໍລິການ," ໂປໂລບໍ່ໄດ້ໃຊ້ຄໍາອະທິບາຍທີ່ເລິກເຊິ່ງ; ໃນຄວາມເປັນຈິງ, ທ່ານໄດ້ເຮັດຂ້ອນຂ້າງກົງກັນຂ້າມ: ທ່ານໄດ້ກ່າວຢ່າງຈະແຈ້ງ." ພວກເຮົາຕ້ອງເຮັດສິ່ງທີ່ເຫັນໄດ້ຊັດເຈນກັບພວກເຮົາແລະທີ່ກະຕຸ້ນຈິດໃຈພວກເຮົາໃຫ້ເຮັດ.

ແນວໂນ້ມຂອງມະນຸດພວກເຮົາແມ່ນຄິດວ່າຂອງພຣະຣາຊທານບາງຢ່າງສໍາຄັນກ່ວາສິ່ງຂອງອື່ນໆ. ກົງກັນຂ້າມ, ຫຼາຍໄປກ່ວານັ້ນຄຣິສຕຽນສ່ວນຫຼາຍເຊື່ອວ່າພວກເຂົາບໍ່ມີບົດບາດສໍາຄັນອັນໃດໃນອານາຈັກຂອງພຣະເຈົ້າ. ຄວາມຄິດນັ້ນບໍ່ແມ່ນຄວາມຄິດທີ່ມາຈາກປໂຍກເຫຼົ່ານີ້!

ຄຣິສຕະຈັກບໍ່ໄດ້ທໍາໜ້າທີ່ແລະເຕີບໃຫຍ່ເພາະຜູ້ສັ່ງສອນເທສນາແລະຄຣູສອນເຮັດໜ້າທີ່ເທົ່ານັ້ນ. ພຣະກາຍພຣະຄຣິດຈະເຣີນເຕີບໂຕຂນະທີ່ພວກເຮົາແຕ່ລະຄົນນໍາໃຊ້ຂອງພຣະຣາຊທານທີ່ພຣະເຈົ້າຊົງປະທານໃຫ້ແກ່ພວກເຮົາ. ບໍ່ວ່າທ່ານຈະເປັນຄົນໜຸ່ມຫຼືເຖົ້າ, ຮັ່ງມີຫຼືທຸກຍາກ, ຊາຍຫຼືຍິງ, ທ່ານກໍເປັນພາກສ່ວນທີ່ສໍາຄັນຂອງພຣະກາຍຂອງພຣະຄຣິດ! ຄຣິສຕະຈັກບໍ່ສາມາດບັນລຸຄວາມສົມບູນຢ່າງເຕັມທີ່ໄດ້ຈົນກ່ວາທຸກໆສ່ວນຂອງບຸກຄົນທີ່ເປັນສະມາຊິກນໍາໃຊ້ຂອງພຣະຣາຊທານທີ່ພຣະເຈົ້າໄດ້ປະທານໃຫ້ເພື່ອທໍາຄວາມດີແລະການເຕີບໃຫຍ່ຂອງພຣະກາຍ.

ຖ້າຄຣິສຕະຈັກຂອງທ່ານມີທຸກສິ່ງຄືກັບຄຣິສຕະຈັກຂອງຂ້າພະເຈົ້າ, ມີບັນຫາ-ຄືກັບທຸກໆຄຣິສຕະຈັກຢູ່ໃນໂລກນີ້, ແຕ່ໜ້າເສັຽດາຍ, ບໍ່ມີຄຣິສຕະຈັກໃດທີ່ສົມບູນແບບຄືກັບສວັນ, ບໍ່ວ່າທ່ານຈະຊອກຄົ້ນຫາຫຼາຍປານໃດທ່ານກໍຈະບໍ່ພົບ. ແຕ່ພວກເຮົາພັດສ້າງບັນຫາທີ່ຍິ່ງໃຫຍ່ກ່ວານີ້ເມື່ອພວກເຮົາກ່າວໂທດໃສ່ຢູ່ໃນພາກສ່ວນຕ່າງໆຂອງຮ່າງກາຍ. "ຖ້າມີພຽງແຕ່ສິດຍາພິບານຂອງຂ້າພະເຈົ້າເທົ່ານັ້ນທີ່ເປັນນັກເທດທີ່ດີກ່ວາ." "ຖ້າມີພຽງຄຣິສຕະຈັກຂອງຂ້າພະເຈົ້າມີເພງປະເພດນີ້ຫຼືໂປແກຣມປະເພດນັ້ນ, ຄຣິສຕະຈັກຈະມີສຸຂພາບແຂງແຮງແລະເຕີບໃຫຍ່." "ການປະເມີນຜົນແລະປະເມີນຄໍາຕໍາໜິ" ບໍ່ໄດ້ຖືກຈົດຊື່ເຂົ້າໃນລາຍການຂອງພຣະຄັມພີຂອງພຣະຣາຊທານທາງຝ່າຍວິນຍານ! ແທນທີ່ພວກເຮົາຄວນໃຊ້ຂອງພຣະຣາຊທານຂອງພວກເຮົາ "ອີງຕາມພຣະຄຸນທີ່ໄດ້ມອບໃຫ້ພວກເຮົາ" (ຂໍ້ 6) ແລະພວກເຮົາຕ້ອງເຮັດພາກສ່ວນຂອງພວກເຮົາເພື່ອສ້າງແລະທໍາໜ້າທີ່ເພື່ອເຮັດໃຫ້ສຸຂພາບຂອງຄຣິສຕະຈັກເຂັ້ມແຂງຂຶ້ນ.

## 3 ໂຣມ 12:9-16

*9ຈົ່ງຮັກດ້ວຍໃຈຈິງຈົ່ງກຽດຊັງສິ່ງຊົ່ວຈົ່ງຍຶດໝັ້ນໃນສິ່ງທີ່ດີ. 10ຈົ່ງຮັກກັນເໝືອນສັນພີ່ນ້ອງສ່ວນການໃຫ້ກຽດແກ່ກັນ*
*ແລະກັນນັ້ນຈົ່ງຖືວ່າຜູ້ອື່ນດີກ່ວາຕົນ. 11ຢ່າຂີ້ຄ້ານແຕ່ຈົ່ງເອົາໃຈໃສ່ຈົ່ງມີໃຈຮ້ອນຮົນດ້ວຍພຣະວິນຍານຈົ່ງບົວລະບັດ*
*ອົງພຣະຜູ້ເປັນເຈົ້າ. 12ຈົ່ງຊົມຊື່ນຍິນດີໃນຄວາມໄວ້ວາງໃຈຈົ່ງອົດທົນຕໍ່ຄວາມຍາກລໍາບາກຈົ່ງໝັ້ນເອົາໃຈໃສ່ໃນ*
*ການໄຫ້ວວອນ. 13ຈົ່ງຊ່ອຍໄພ່ພົນຂອງພຣະເຈົ້າເມື່ອເຂົາຂັດສົນຈົ່ງຕ້ອນຮັບແຂກດ້ວຍໃຈເຫຼື້ອມໃສ. 14ຈົ່ງອວຍ*
*ພອນແກ່ຄົນທີ່ຂົ່ມເຫັງເຈົ້າຈົ່ງໃຫ້ພອນຢ່າປ້ອຍດ່າ. 15ຈົ່ງຊົມຊື່ນຍິນດີກັບຜູ້ທີ່ມີຄວາມຊົມຊື່ນຍິນດີຈົ່ງຮ້ອງໄຫ້ກັບຜູ້ທີ່*
*ຮ້ອງໄຫ້. 16ຈົ່ງເປັນນໍ້າໜຶ່ງໃຈດຽວກັນຢ່າຄຶດໃຫຍ່ໄຝສູງແຕ່ຈົ່ງຮັບຮູ້ຄົບສາມັນຕໍ່າຕ້ອຍຢ່າຖືຕົວວ່າເປັນຜູ້ສລາດ.*

ໃນຂໍ້ 9, ໂປໂລໄດ້ບອກພວກເຮົາ "ສ່ວນປະກອບລັບ" ທີ່ຊ່ອຍໃຫ້ພຣະກາຍຂອງພຣະຄຣິດເຕີບໃຫຍ່, ແຂງແຮງ, ແລະກາຍເປັນບຸກຄົນທີ່ມີສຸຂພາບດີທີ່ສຸດ: "ຄວາມຮັກ." ນີ້ແມ່ນຄໍາສັບໃນພາສາກຣີກ**ອາກາເປ**, ເປັນຄໍາທີ່ສະ

ແດງເຖິງລັກສະນະທີ່ສຳຄັນຂອງພຣະເຈົ້າ (1 ໂຢຮັນ 4:8). ນີ້ບໍ່ແມ່ນຄຳສັບທີ່ອະທິບາຍເຖິງອາລົມ; ມັນແມ່ນຄຳເວົ້າທີ່ພວກເຮົາປະຕິບັດ. ພວກເຮົາບໍ່ໄດ້ຖືກເອີ້ນໃຫ້ມີພຽງແຕ່ຄວາມຮູ້ສຶກທີ່ອົບອຸ່ນແລະຄວາມຕື່ນເຕັ້ນກ່ຽວກັບຄຣິສຕະຈັກ, ແທນທີ່ຈະ, ພວກເຮົາຕ້ອງຮັກຄຣິສຕະຈັກໂດຍການເຊີດຊູຮັບໃຊ້ຄຣິສຕະຈັກດ້ວຍຫົວໃຈແລະຊີວິດຂອງພວກເຮົາ. ພວກເຮົາປະຕິບັດດ້ວຍຄວາມຮັກທີ່ເຕັມດ້ວຍຄວາມຮັກ, "ທັງໝົດ" ໃນຄຳໝັ້ນສັນຍາ.
ໂປໂລໄດ້ສ້າງຄວາມຮັກອັນລ້ຳຄ່ານີ້ໂດຍອ້າງອີງເຖິງເມືອງຟີລາເດັນເຟັຽ; ຮັກອ້າຍນ້ອງ. ພວກເຮົາຕ້ອງ "ຮັກເຊິ່ງກັນແລະກັນຢ່າງເລິກເຊິ່ງຄືອ້າຍເອື້ອຍນ້ອງ." ສ່ວນຫຼາຍແລ້ວມັນກົງກັນຂ້າມກັບວິທີທີ່ພວກເຮົາເບິ່ງຄວາມຮັກ. ຂ້າພະເຈົ້າໄດ້ນັ່ງຢູ່ໃນກອງປະຊຸມໃຫ້ຄຳປຶກສາກ່ຽວກັບການແຕ່ງງານນັບບໍ່ຖ້ວນເຊິ່ງມີສາມີພັຣຍາເບິ່ງຂ້າພະເຈົ້າແລ້ວເວົ້າວ່າ "ທ່ານຮູ້ບໍ່, ຂ້ານ້ອຍບໍ່ໄດ້ຮັກສາມີ/ພັຣຍາຂອງຂ້ານ້ອຍອີກຕໍ່ໄປ." ຄວາມໝາຍຂອງຄົນໆນັ້ນແມ່ນລາວບໍ່ມີຄວາມຮູ້ສຶກອົບອຸ່ນແລະບໍ່ຄຸ້ນເຄີຍກັບປະສົບການການເປັນສາມີພັຣຍາທີ່ພວກເຂົາໄດ້ເຂົ້າຮ່ວມການແຕ່ງງານ.

ຂ້າພະເຈົ້າບອກພວກເຂົາ, "ຂ້າພະເຈົ້າເຂົ້າໃຈວ່າທ່ານອາດເປັນຄົນທີ່ຮັກກັບນາງ, ແຕ່ວ່າດຽວນີ້ທ່ານຕ້ອງຮັກນາງຫຼາຍກ່ວາເກົ່າ." ພວກເຂົາອາດບໍ່ມີຄວາມຮູ້ສຶກທີ່ພວກເຂົາເຄີຍມີຕໍ່ຄູ່ຮັກຂອງພວກເຂົາ, ແຕ່ດຽວນີ້ພວກເຂົາຈຳເປັນຕ້ອງເຮັດດ້ວຍຄວາມຮັກ, ຮັບໃຊ້ແລະເບິ່ງຄູ່ສົມລົດຂອງພວກເຂົາ. ເປັນຫຍັງພວກເຮົາຈຶ່ງຄວນຮັກແລະຮັບໃຊ້ຄຣິສຕະຈັກໃນວິທີທີ່ສຸພາບຮຽບຮ້ອຍ? ເພາະວ່ານັ້ນແມ່ນສິ່ງທີ່ພຣະຄຣິດຮັກພວກເຮົາ. ນັບຕັ້ງແຕ່ພຣະເຢຊູຄຣິດໄດ້ຮັກພວກເຮົາພວກເຮົາກໍ່ເປັນເຈົ້າສາວຂອງພຣະອົງ-ໃນການເສັຽສຣະພຣະອົງເອງ, ເປັນດ້ວຍສາຍເຫດອັນໃດພວກເຮົາຈຶ່ງບໍ່ສາມາດຮັກຄຣິສຕະຈັກໄດ້ໃນທາງດຽວກັນ?

<u>**ການນຳໃຊ້ໃນຊີວິດ.**</u>

**ທ່ານຈະດຳເນີນຊີວິດຕາມຄຳໝັ້ນສັນຍາຂອງທ່ານຕໍ່ຄຣິສຕະຈັກຂອງພຣະຄຣິດໃນອາທິດນີ້ແນວໃດ? ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້.**

- ❖ **ຈົ່ງຄິດ.** ຈົ່ງພິຈາລະນາເບິ່ງວິທີທີ່ພຣະເຢຊູໄດ້ຮັກທ່ານແລະພິຈາລະນາການຮຽກເອີ້ນຂອງພຣະອົງທີ່ໃຫ້ຊີວິດຂອງທ່ານຮັກເຈົ້າສາວຂອງພຣະອົງໃນທັນທີທີ່ພຣະອົງຮັກທ່ານ. ຈົ່ງຖາມຕົວເອງວ່າ "ຂ້ານ້ອຍຄວນດຳເນີນຊີວິດທີ່ແຕກຕ່າງແນວໃດໃນຄວາມຮັກຂອງພຣະເຈົ້າທີ່ມີຕໍ່ຂ້ານ້ອຍ?".
- ❖ **ຜູ້ຮັບໃຊ້.** ຈົ່ງລະບຸຂອງປະທານທາງຝ່າຍວິນຍານທີ່ພຣະເຈົ້າໄດ້ມອບໃຫ້ທ່ານແລະໝັ່ນໃຊ້ມັນຢູ່ເລື້ອຍໆ. ຂໍໃຫ້ສິດຍາພິບານຂອງທ່ານສະມາຊິກຄົນອື່ນໆໃນກຸ່ມຂອງທ່ານຮູ້ວິທີທີ່ທ່ານສາມາດໃຊ້ຂອງພຣະຣາຊທານຂອງທ່ານເພື່ອງານຮັບໃຊ້ໃຫ້ເຂັ້ມແຂງ, ແລະສນັບສນູນຄຣິສຕະຈັກຂອງທ່ານ.
- ❖ **ຈົ່ງຊຸກຍູ້.** ໃນຖານະທີ່ເປັນພຣະກາຍຂອງພຣະຄຣິດ, ພວກເຮົາຄວນມີໜ້າທີ່ຮັບຜິດຊອບຕໍ່ເຊິ່ງກັນແລະກັນ. ຖ້າທ່ານຫາກຮູ້ວ່າພີ່ນ້ອງໃນຄວາມເຊື່ອດຽວກັນບໍ່ຕິດພັນກັບຄຣິສຕະຈັກຫຼືບໍ່ໃຊ້ຂອງພຣະຣາຊທານທາງຝ່າຍວິນຍານຂອງລາວ, ຊັກຊວນດ້ວຍຄວາມຮັກແລະຊຸກຍູ້ໃຫ້ບຸກຄົນນັ້ນມີພາລະບົດບາດໃນການຮັບໃຊ້ໃນພຣະກາຍຂອງພຣະຄຣິດ.

ຖ້າທ່ານໄດ້ຍິນຜູ້ໃດຜູ້ນຶ່ງເວົ້າ (ຫຼືຖ້າທ່ານຄິດວ່າຕົວທ່ານເອງ): "ຂ້ານ້ອຍຮັກພຣະເຢຊູ, ແຕ່ຂ້ານ້ອຍບໍ່ຮັກຄຣິສຕະຈັກ" ຈົ່ງເຕືອນສະຕິບອກໃຫ້ຮູ້ວ່າພຣະເຢຊູຄຣິດຮັກເຈົ້າສາວຂອງພຣະອົງຫຼາຍສ່ຳໃດ. ຈົ່ງເບິ່ງຜ່ານຂໍ້ບົກຜ່ອງຂອງນາງ (ນາງຈະມີບາງຢ່າງ), ແລະຊອກຫາຄວາມງາມຂອງນາງອີກເທື່ອນຶ່ງ. ຄວາມຮັກແມ່ນການເລືອກ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ http://lsbf.us/ ແປໂດຍ VR.